

# ມອບ-ຮັບ ຜູ້ອຳນວຍການໃຫຍ່ ຕລຊລ




ລັດຖະບານແຫ່ງ ສປປ ລາວກໍ່ຄືຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ໄດ້ແຕ່ງຕັ້ງຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ (ຕລຊລ) ຄົນໃໝ່ ໃນວັນທີ 10 ກັນຍາ 2021 ທີ່ອາຄານ ຕລຊລ ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ສອນໄຊ ສິດພະໄຊ ກຳມະການສູນກາງພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ), ຮອງປະທານ-ຜູ້ປະຈຳການ ຄຄຊ; ມີບັນດາຄະນະນຳ, ຜູ້ຕາງໜ້າບັນດາກົມກອງ ທຫລ, ຕລຊລ; ບັນດາບໍລິສັດຈົດທະບຽນ, ບໍລິສັດຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າຫ້ອງການ ທຫລ, ປະທານສະພາບໍລິຫານ ຕລຊລ ແລະ ທ່ານ ພານຸສັກ ແກ່ນວົງພະຈັນ ຫົວໜ້າກົມຈັດຕັ້ງແລະພະນັກງານ ທຫລ ໄດ້ພັດປ່ຽນກັນຂຶ້ນອ່ານຂໍ້ຕົກລົງ ວ່າດ້ວຍການຍົກຍ້າຍ, ແຕ່ງຕັ້ງ ແລະ ສັບຊ້ອນພະນັກງານຕິດພັນກັບ ຕລຊລ ແລະ ທຫລ ຕາມລຳດັບ; ຈາກນັ້ນ, ກໍ່ໄດ້ມີການເຊັນບົດບັນທຶກມອບ-ຮັບໜ້າທີ່ຜູ້ອຳນວຍການໃຫຍ່ ຕລຊລ ລະຫວ່າງ ທ່ານ ອົ໋ອດ ພົມຊຽງດີ ຜູ້ອຳນວຍການໃຫຍ່ ຕລຊລ (ຜູ້ເກົ່າ) ແລະ ທ່ານ ນາງ ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການໃຫຍ່ ຕລຊລ (ຜູ້ໃໝ່) ໂດຍການໃຫ້ກຽດເປັນສັກຂີພິຍານຂອງທ່ານຮອງປະທານ-ຜູ້ປະຈຳການ ຄຄຊ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ປະຫວັດ ແລະ ການເຄື່ອນໄຫວຂອງທ່ານ ນາງ ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການໃຫຍ່ ຕລຊລ (ຜູ້ໃໝ່); ທ່ານໄດ້ສຳເລັດການສຶກສາປະລິນຍາໂທ ສາຂາເສດຖະສາດຈາກມະຫາວິທະຍາໄລ ຄູບານ, ສະຫະພັນ ຣັດເຊຍ ລະຫວ່າງປີ

1987-1993; ປະລິນຍາໂທ ສາຂານະໂຍບາຍສາທາລະນະ ມະຫາວິທະຍາໄລ ໄຊຕາມະ, ປະເທດຍີ່ປຸ່ນ ລະຫວ່າງ 1997-1998; ປະລິນຍາໂທ ສາຂາບໍລິຫານທຸລະກິດສາກົນ ມະຫາວິທະຍາໄລ ຟຣິນເດີ, ປະເທດ ອົດສະຕາລີ ລະຫວ່າງ 2005-2006.

ໃນລະຫວ່າງປີ 1993-1999 ທ່ານໄດ້ປະຕິບັດໜ້າທີ່ ເປັນພະນັກງານປະຈໍາກົມນະໂຍບາຍເງິນຕາ, ທຫລ; ໃນປີ 2000 ຖືກແຕ່ງຕັ້ງເປັນຫົວໜ້າພະແນກຢູ່ສໍານັກງານປົກປ້ອງເງິນຝາກ, ທຫລ; ປີ 2003-2005 ເປັນຜູ້ຊ່ວຍຊ່ຽວຊານທີ່ປຶກສາດ້ານການທະນາຄານສາກົນໃນການປັບປຸງໂຄງສ້າງຂອງທະນາຄານພັດທະນາລາວ; ປີ 2007 ໄດ້ສັບຊ້ອນມາປະຈໍາການຢູ່ກົມນະໂຍບາຍເງິນຕາ, ທຫລ; ປີ 2009 ເປັນຮອງຫົວໜ້າກົມດັ່ງກ່າວ ຮັບຜິດຊອບກ່ຽວກັບການວິເຄາະເງິນຕາ ແລະ ການຈັດຕັ້ງປະຕິບັດນະໂຍບາຍອັດຕາແລກປ່ຽນ, ຄວບຄຸມການສະໜອງເງິນໃນລະບົບເສດຖະກິດ ຜ່ານການການົດເງິນແຮຝາກບັງຄັບ ແລະ ຕິດ ຕາມການພັດທະນາຂອງຕະຫຼາດເງິນທັງພາຍໃນ ແລະ ຕ່າງປະເທດ; ນັບແຕ່ປີ 2010, ທ່ານໄດ້ເຂົ້າປະຕິບັດໜ້າທີ່ໃນຕະຫຼາດທຶນ ເປັນຮອງຫົວໜ້າສໍານັກງານ ຄຄຊ, ຮັບຜິດຊອບຊີ້ນໍາ ພະແນກຄຸ້ມຄອງການອອກຈໍາໜ່າຍຫຼັກຊັບ, ພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ພະແນກຄຸ້ມຄອງຕະຫຼາດຫຼັກຊັບ; ປີ 2014, ໄດ້ຖືກແຕ່ງຕັ້ງຂຶ້ນເປັນຮັກສາການຫົວໜ້າສໍານັກງານ ຄຄຊ ແລະ ໄດ້ຖືກແຕ່ງຕັ້ງເປັນຫົວໜ້າສໍານັກງານ ຄຄຊ ນັບແຕ່ປີ 2015 ເປັນຕົ້ນມາ.

ຕລຊລ ຮັບການສ້າງຕັ້ງຂຶ້ນໃນວັນທີ 10.10.2010 ແລະ ໄດ້ເປີດໃຫ້ມີການຊື້-ຂາຍໃນວັນທີ 11.01.2011 ເປັນຕົ້ນມາ ແລະ ໃນໄລຍະ 8 ເດືອນປີ 2021 ນີ້ ໄດ້ສໍາເລັດການຈົດທະບຽນພັນທະບັດລັດຖະບານປະເພດດຸ່ນດ່ຽງງົບປະມານ ແລະ ຄັງ ເງິນສະກຸນເງິນກີບ 43 ຊຸດ ລວມມູນຄ່າ 994,94 ຕື້ກີບ ແລະສະກຸນເງິນໂດລາ 75 ຊຸດ ລວມມູນຄ່າ 30,6 ລ້ານໂດລາສະຫະລັດ; ສໍາເລັດການຄົ້ນຄວ້າແນວທາງປັບປຸງຄຸນນະພາບຂອງບໍລິສັດຈົດທະບຽນ ແລະຜົນປະກອບການຂອງບໍລິສັດຈົດທະບຽນ; ສໍາເລັດການສະຫຼຸບຕີລາຄາຄືນບັນຫາຄົງຄ້າງທີ່ຕິດພັນກັບວຽກງານຈົດທະບຽນ, ການເປີດເຜີຍຂໍ້ມູນ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ ພ້ອມທັງສະເໜີວິທີການແກ້ໄຂບັນຫາຄົງຄ້າງດັ່ງກ່າວ.

ໃນທ້າຍເດືອນ ສິງຫາ 2021 ດັດຊະນີ ຕລຊລ ປິດຢູ່ທີ່ 636.90 ຈຸດ ເພີ່ມຂຶ້ນ 60.43 ຈຸດ ຫຼື 10.48% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ມູນຄ່າການຊື້-ຂາຍຫຼັກຊັບຢູ່ທີ່ 79,05 ຕື້ກີບ ຫຼຸດລົງ 44.13% ທຽບໃສ່ໄລຍະດຽວກັນຂອງ ປີຜ່ານມາ, ໃນນີ້ການຊື້-ຂາຍຮຸ້ນລາຍໃຫຍ່ ກວມເອົາ 55.9% ຂອງມູນຄ່າການຊື້-ຂາຍທັງໝົດ. ຈໍານວນບັນຊີຫຼັກຊັບຮອດທ້າຍ ເດືອນສິງຫາ 2021 ມີທັງໝົດ 16,752 ບັນຊີ ເພີ່ມຂຶ້ນ 4.2% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ (ໃນນັ້ນມີນັກລົງທຶນພາຍໃນ 79.42% ແລະ ນັກລົງທຶນຕ່າງປະເທດ 20.58% ຂອງຈໍານວນບັນຊີທັງໝົດ); ນອກນັ້ນ, ຍັງພັດທະນາການສະໜອງຂໍ້ມູນຂ່າວສານໃນ ຕລຊລ ມີຄວາມຫຼາກຫຼາຍ.

ສໍາເລັດການຂຶ້ນທະບຽນ ແລະ ຝາກພັນທະບັດລັດຖະບານໃນລະບົບພັນທະບັດ ຕລຊລ ຈໍານວນ 118 ຊຸດ (ສະກຸນເງິນກີບ 43 ຊຸດ ແລະ ສະກຸນເງິນໂດລາ 75 ຊຸດ), ລວມມູນຄ່າ 994,947,000,000 ກີບ ແລະ 30,602,600 ໂດລາສະຫະລັດ; ສໍາເລັດການຊໍາລະດອກເບ້ຍພັນທະບັດລັດຖະບານ ລວມມູນຄ່າ 103,935,570,453.41 ກີບ ແລະ 874,202.06 ໂດລາສະຫະລັດ; ສໍາເລັດການຊໍາລະເງິນປັນຜົນຮຸ້ນໃຫ້ບໍລິສັດຈົດທະບຽນ 5 ບໍລິສັດ ລວມມູນຄ່າທັງໝົດ 120,230,054,249 ກີບ; ນອກຈາກນັ້ນ, ກໍ່ມີການພັດທະນາລະບົບໄອທີ; ການສ້າງ, ປັບປຸງນິຕິກໍາ ແລະ ວຽກງານອື່ນໆ.

ໃນໂອກາດດັ່ງກ່າວ; ທ່ານຮອງປະທານ-ຜູ້ປະຈໍາການ ຄຄຊ ໄດ້ມີຄໍາເຫັນວ່າ: ໃຫ້ຄະນະອໍານວຍການຕະຫຼອດຮອດພະນັກງານ ຕລຊລ ຕ້ອງເອົາໃຈໃສ່ວຽກງານວິຊາສະເພາະ ເປັນຕົ້ນຕິດຕາມການຂາຍຮຸ້ນຂອງບໍລິສັດຈົດທະບຽນ ແລະ ການ

ອອກ ຈຳໜ່າຍພັນທະບັດລັດຖະບານໃນ ຕລຊລ ໃຫ້ໄດ້ຮັບປະສິດທິຜົນສູງ, ເອົາໃຈໃສ່ແກ້ໄຂສະພາບຄ່ອງຂອງ ຕລຊລ ໂດຍປະສານສົມທົບກັບ ສຄຄຊ; ເອົາໃຈໃສ່ຄຸ້ມຄອງ ແລະ ພັດທະນາລະບົບໄອທີຂອງ ຕລຊລ ໃນປະຈຸບັນໃຫ້ມີຄວາມຮັບປະກັນການເຄື່ອນໄຫວຕົວຈິງ ແລະ ໃຫ້ມີປະສິດທິພາບສູງຍິ່ງຂຶ້ນ.

# ຂ່າວ: ຣັດສະໜີ ດວງສັດຈະ




## ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນລາວ